ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 2687 /ກຂອ.ບຂອ

ນະຄອນຫຼວງວຽງຈັນ, ວັນທີ ໐1 ກັນຍາ 2020

## ແຈ້ງການ

**ເຖິງ** : - ທ່ານ ປະທານສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ.

- ບັນດາບໍລິສັດ ນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ.

**ເລື່ອງ** : ການນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW) ເຂົ້າໃນການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1 (ນະຄອນຫຼວງວຽງຈັນ).

- ອີງຕາມ ແຈ້ງການ ຂອງ ຫ້ອງການ, ກະຊວງການເງິນ, ເລກທີ 1573/ຫກງ, ລົງວັນທີ 05 ສິງຫາ 2020 ກ່ຽວກັບການນຳໃຊ້ລະບົບແຈ້ງພາສີປະຕູດຽວ (Lao National Single Window) ເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າທົ່ວໄປ ແລະ ນ້ຳມັນເຊື້ອໄຟ ຢູ່ ດ່ານພາສີສາກົນຂົວມິດຕະພາບ 1.

ກົມການນຳເຂົ້າ ແລະ ສົ່ງອອກ (ກົມ ຂອ) ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ອີງຕາມແຈ້ງການ ຂອງ ຫ້ອງການ, ກະຊວງການເງິນ, ເລກທີ 1573/ຫກງ, ເລີ່ມແຕ່ວັນທີ 14 ກັນຍາ 2020 ກົມ ຂອ ຈະພິຈາລະນາອອກໃບອະນຸຍາດນຳເຂົ້າສິນຄ້າປະເພດ ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ ທີ່ນຳຜ່ານຂົວມິດຕະພາບ 1 (ນະຄອນຫຼວງວຽງຈັນ) ໂດຍຜ່ານລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ເທົ່ານັ້ນ. ບໍລິສັດ ນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອາຍແກັສຫຸງຕົ້ມ ໃດທີ່ຍັງບໍ່ທັນໄດ້ລົງທະບຽນນຳໃຊ້ລະບົບ LNSW ແມ່ນໃຫ້ຮີບຮ້ອນລົງທະບຽນນຳໃຊ້ໂດຍໄວ, ໂດຍສາມາດພົວພັນ ບໍລິສັດ ຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈຳກັດ (ເບີໂທ : 020 5558 6617, 020 5554 4634, 020 5554 4638) ເພື່ອຂໍຮັບການຝຶກອົບຮົມ ແລະ ລົງທະບຽນຂໍລະຫັດຜູ້ນຳໃຊ້ລະບົບດັ່ງກ່າວ. ແບບຟອມສະເໜີນຳໃຊ້ລະບົບ ສາມາດດາວໂຫຼດໄດ້ໃນ www. prod.laonsw.net ຫຼື ເວັບໄຊ www.laotradeportal.gov.la

ສຳລັບການນຳເຂົ້າຜ່ານດ່ານພາສີສາກົນອື່ນແມ່ນສາມາດສືບຕໍ່ນຳໃຊ້ລະບົບເຈັ້ຍແບບເກົ່າຈົນກວ່າຈະມີແຈ້ງການເພີ່ມເຕີມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ

ກົມການນຳເຂົ້າແລະສົ່ງອອກ

ສຸລິຍົນ ພິລາວົງ